ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ອົງການອະທິໄອຍະການ
ປະຊາຊົນແຫ່ງ ສປປລ.

ເລກທີ 11 /ອທກ.

ເຖິງ ບັນດາໄອຍະການປະຊາຊົນແຂວງ, ກຳແພງນະຄອນແລະເມືອງ ໃນທົ່ວປະເທດ.

ເລື່ອງ: ຄຳສັ່ງແນະນຳປະຕິບັດບາງມາດຕາຂອງກົດຫມາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດຫມາຍອາຍາ, ດຳເນີນຄະດີອາຍາແລະແພ່ງ.

ພາຍຫລັງການປະຕິບັດກົດຫມາຍໄລຍະນຶ່ງ ໄດ້ສັງເກດເຫັນວ່າສານ, ໄອຍະການປະຊາຊົນແລະອົງການສືບສວນ-ສອບສວນ ມີຄວາມເຂົ້າໃຈຄວາມຫມາຍຂອງບາງມາດຕາຂອງກົດຫມາຍວ່າດ້ວຍອົງການໄອຍະການປະຊາຊົນ, ອາຍາ, ກົດຫມາຍດຳເນີນຄະດີອາຍາແລະແພ່ງບໍ່ຖືກຕ້ອງຕາມເນື້ອໃນຂອງກົດຫມາຍ ອັນເປັນການແຕະຕ້ອງເຖິງເສລີພາບຂອງພົນລະເມືອງ, ສິດແລະຜົນປະໂຫຍດຂອງພົນລະເມືອງແລະຂອງການຈັດຕັ້ງຂອງລັດແລະສັງຄົມ. ເພື່ອແກ້ໄຂສະພາບການດັ່ງກ່າວນັ້ນ ຂ້າພະເຈົ້າຈຶ່ງໄດ້ອອກຄຳສັ່ງແນະນຳຈຳນວນນຶ່ງມາຍັງທ່ານ ເພື່ອແນະນຳພາກປະຕິບັດກົດຫມາຍດັ່ງກ່າວໃຫ້ຖືກຕ້ອງຕາມຄວາມຫມາຍຂອງມັນ. ນອກຈາກນັ້ນກໍຍັງໄດ້ພົບເຫັນການລະເມີດກົດຫມາຍອື່ນໆ ແຕ່ຂ້າພະເຈົ້າຈະອອກຄຳສັ່ງແນະນຳຕາມພາຍຫລັງ ໂດຍອີງຕາມສະພາບການຕົວຈິງຂອງແຕ່ລະໄລຍະ. ໃນຖານະເປັນອົງການຕິດຕາມກວດກາການປະຕິບັດກົດຫມາຍ ໄອຍະການປະຊາຊົນຕ້ອງປະຕິບັດກົດຫມາຍໃຫ້ຖືກຕ້ອງຕາມຄວາມຫມາຍຂອງມັນ. ຖ້າເຫັນວ່າອົງການສືບສວນ-ສອບສວນໄດ້ລະເມີດກົດຫມາຍ ໄອຍະການຕ້ອງອອກມາດຕະການແກ້ໄຂຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດຫມາຍ. ເຖິງວ່າໄອຍະການບໍ່ມີສິດໃຫ້ຄຳສັ່ງແກ່ສານໄດ້ແຕ່ໄອຍະການກໍມີສິດສະເຫນີຄັດຄ້ານຄຳຊີ້ຂາດ, ຄຳຕັດສິນແລະຄຳພິພາກສາຂອງສານຂັ້ນລຸ່ມຕໍ່ສານຂັ້ນເທິງ ເພື່ອຕັດສິນຄະດີໃນຂັ້ນລົບລ້າງຫລືຂັ້ນຕິດຕາມກວດກາ. ຖ້າເຫັນວ່າເກີນຂອບເຂດສິດອຳນາດຂອງຕົນແລ້ວ ໄອຍະການຕ້ອງລາຍງານໃຫ້ໄອຍະການຂັ້ນເທິງແລະໃຫ້ອະທິໄອຍະການປະຊາຊົນທີ່ນະຄອນວຽງຈັນ ເພື່ອວາງມາດຕະການຟື້ນຟູສິດທີ່ໄດ້ຖືກລະເມີດແລະປົກປັກຮັກສາສິດແລະຜົນປະໂຫຍດອັນຊອບທຳຂອງພົນລະເມືອງແລະຂອງອົງການຈັດຕັ້ງຂອງລັດແລະສັງຄົມ.

ວຽງຈັນ, ວັນທີ 5 ກຸມພາ 1993

ອະທິໄອຍະການປະຊາຊົນ

ພາຍ ຊູລາ

ບ່ອນສົ່ງ:

- ຄະນະປະຈຳສະພາປະຊາຊົນສູງສຸດ
  (ເພື່ອໃຊ້ຕາງລາຍງານ)